ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມປູກຝັງ

ເລກທີ 0903 /ກປຝ
ນະຄອນຫລວງວຽງຈັນ, ລົງວັນທີ 12 FEB 2025

# ຄຳແນະນຳ
## ກ່ຽວກັບ ເງື່ອນໄຂດ້ານສຸຂານາໄມ ແລະ ຄວາມສະອາດປອດໄພ ສຳລັບຝັກຫູອກໄໝມ້ອນຜ່ານຂະບວນການດ້ອຍຄວາມຮ້ອນເພື່ອສົ່ງອອກຈາກ ສປປ ລາວ ໄປ ສປ ຈີນ

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນພືດ ແລະ ການກັກກັນພືດ ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມປູກຝັງ ສະບັບ ເລກທີ 0078/ກປ, ລົງວັນທີ 12 ມັງກອນ 2022;
- ອີງຕາມ ຂໍ້ເງື່ອນໄຂດ້ານສຸຂານາໄມ ແລະ ຄວາມສະອາດປອດໄພ ສຳລັບຝັກຫູອກໄໝມ້ອນຜ່ານຂະບວນການດ້ອຍຄວາມຮ້ອນເພື່ອສົ່ງອອກຈາກ ສປປ ລາວ ໄປ ສປ ຈີນ, ລົງວັນທີ 12 ຕຸລາ 2024.

ໃນໄລຍະຜ່ານມາ ລັດຖະບານ ໄດ້ມີນະໂຍບາຍສົ່ງເສີມການຜະລິດພືດເປັນສິນຄ້າ ເຮັດໃຫ້ມີການແລກປ່ຽນຄ້າຂາຍຜະລິດຕະພັນສິນຄ້າກະສິກຳ ກັບພາກພື້ນ ແລະ ສາກົນ ນັບມື້ນັບເພີ່ມຂຶ້ນ. ໃນນັ້ນ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ລົງນາມຮ່ວມກັບ ອົງການບໍລິຫານພາສີ ແຫ່ງ ສປ ຈີນ ໃນຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມ ສຳລັບການສົ່ງອອກ ຝັກຫູອກໄໝມ້ອນ ຂອງ ສປປ ລາວ ໄປ ສປ ຈີນ ເຊິ່ງເຫັນວ່າໄດ້ມີການສົ່ງເສີມປູກມອນລ້ຽງມ້ອນ ໃນຫຼາຍພື້ນທີ່ສ້າງລາຍຮັບໃຫ້ປະຊາຊົນ ແລະ ປະກອບ ສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງຄົມຂອງຊາດ ໄດ້ເປັນຢ່າງດີ.

ເພື່ອໃຫ້ການຄຸ້ມຄອງການຜະລິດ ແລະ ການສົ່ງອອກ ຝັກຫູອກໄໝມ້ອນ ຫັນເຂົ້າສູ່ລະບົບ, ມີຄວາມເປັນເອກະພາບ, ໂປ່ງໃສ ແລະ ສອດຄ່ອງກັບ ຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມ ສຳລັບການສົ່ງອອກ ຈາກ ສປປ ລາວ ໄປ ສປ ຈີນ ພ້ອມທັງ ກົດໝາຍ, ລະບຽບການ ແລະ ສົນທິສັນຍາ ວ່າດ້ວຍ ການປ້ອງກັນພືດສາກົນ ທີ່ ສປປ ລາວ ແລະ ສປ ຈີນ ເປັນພາຄີ ນັ້ນ;

## ກົມປູກຝັງ ອອກຄຳແນະນຳ:

### I. ຈຸດປະສົງ ແລະ ເປົ້າໝາຍ
- ເພື່ອປະຕິບັດຕາມ ຂໍ້ກຳນົດເງື່ອນໄຂສຸຂານາໄມ ສຳລັບ ການສົ່ງອອກ ຝັກຫູອກໄໝມ້ອນ ຈາກ ສປປ ລາວ ໄປ ສປ ຈີນ;
- ເພື່ອກຳນົດ ຂັ້ນຕອນ ແລະ ວິທີການປະຕິບັດເງື່ອນໄຂດ້ານສຸຂານາໄມ ສຳລັບການສົ່ງອອກ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ.

II. ເງື່ອນໄຂດ້ານສຸຂານາໄມ ສໍາລັບການສົ່ງອອກ ຝັກຫູອກໄໝມ້ອນ ຈາກ ສປປ ລາວ ໄປ ສປ ຈີນ

1. ຊະນິດ

ຝັກຫູອກໄໝມ້ອນ (ຊື່ພາສາອັງກິດ Cocoon) ໝາຍເຖິງ ຮັງດັກແດ້ຂອງໂຕມ້ອນທີ່ລ້ຽງຢູ່ໃນ ສປປ ລາວ ຊຶ່ງເປັນວັດຖຸດິບ ໂດຍຜ່ານການຜະລິດ, ການຄັດເລືອກຈາກໂຮງເຮືອນລ້ຽງມ້ອນທີ່ໄດ້ມາດຕະຖານ ແລະ ປາດສະຈາກສິ່ງເຈືອປົນ.




2. ໂຮງເຮືອນລ້ຽງ ແລະ ຫຸ້ມຫໍ່ບັນຈຸ

ການຈັດການພາຍໃນໂຮງເຮືອນລ້ຽງ ແລະ ເຮືອນຫຸ້ມຫໍ່ບັນຈຸ ຕ້ອງປະຕິບັດ ດັ່ງລຸ່ມນີ້:

1) ຂະບວນການລ້ຽງ, ການຜະລິດ ແລະ ຫຸ້ມຫໍ່ ຝັກຫລອກມ້ອນຕ້ອງມີມາດຕະການປ້ອງກັນສິ່ງປົນເປື້ອນ , ພາຍຫຼັງຜ່ານຂະບວນການຫຸ້ມຫໍ່ບັນຈຸ ສໍາເລັດ ໃຫ້ແຍກເກັບຮັກສາໄວ້ ສະຖານທີ່ສະອາດ ເພື່ອປ້ອງກັນການຕິດແປດຂອງສັດຕູພືດ ແລະ ການປົນເປື້ອນ;
2) ຝັກຫູອກໄໝມ້ອນທີ່ສົ່ງອອກ ໄປ ສປ ຈີນ ຕ້ອງດໍາເນີນການບໍາບັດດ້ວຍຄວາມຮ້ອນແຫ້ງ ໃນອຸນຫະພູມ 100 ອົງສາ ຢ່າງໜ້ອຍ 2 ຊົ່ວໂມງ.
3) ຕ້ອງຫຸ້ມຫໍ່ດ້ວຍພາຊະນະບັນຈຸທີ່ໃໝ່, ສະອາດ, ປອດໄພ, ຕິດເຄື່ອງໝາຍ ໂດຍສອດຄ່ອງກັບເງື່ອນໄຂດ້ານສຸຂານາໄມແລະ ຄວາມປອດໄພ, ຮັບປະກັນ ບໍ່ໃຫ້ແຕກ, ຕົກເຮ່ຍ ໃນເວລາຂົນສົ່ງ. ກໍລະນີມີ ວັດສະດຸຫຸ້ມຫໍ່ທີ່ເຮັດດ້ວຍໄມ້ ຕ້ອງປະຕິບັດຕາມມາດຕະຖານສາກົນ ດ້ານມາດຕະການສຸຂານາໄມ ສະບັບເລກທີ 15 (ISPM No.15);
4) ຕູ້ຄອນເທນເນີ້ ຫຼື ພາຫະນະ ສໍາລັບ ບັນຈຸຝັກຫູອກໄໝມ້ອນ ສົ່ງອອກ ໄປ ສປ ຈີນ, ໃນເວລາບັນຈຸນັ້ນ ຕ້ອງກວດກາໃຫ້ຢູ່ໃນເງື່ອນໄຂທີ່ສະອາດສະເໝີ. ຕູ້ຄອນເທນເນີ້ ຫຼື ພາຫະນະ ຕ້ອງປິດໃຫ້ແຈບດີຈົນກ່ວາຈະຮອດດ່ານຂາເຂົ້າຂອງ ສປ ຈີນ

3. ການຂຶ້ນທະບຽນສະຖານທີ່ປະກອບການຜະລິດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຂໍຂຶ້ນທະບຽນ ຫຼື ຂໍຕໍ່ໃບທະບຽນ ສວນປູກມອນ, ໂຮງເຮືອນລ້ຽງ, ໂຮງເຮືອນຫຸ້ມຫໍ່ບັນຈຸ, ການບໍາບັດດ້ວຍຄວາມຮ້ອນແຫ້ງ ແມ່ນປະຕິບັດຕາມຄໍາແນະນໍາ ກ່ຽວກັບການຂຶ້ນທະບຽນສະຖານທີ່ປະກອບການຜະລິດ ສໍາລັບການສົ່ງອອກ ພືດ ແລະ ຜະລິດຕະພັນພືດ ສະບັບເລກທີ 1753/ກປ, ລົງວັນທີ 25 ສິງຫາ 2020, ໂດຍຍື່ນຄໍາຮ້ອງເຖິງກົມປູກຝັງ ເພື່ອຄົ້ນຄວ້າພິຈາລະນາ.

ຄໍາຮ້ອງຂໍຂຶ້ນທະບຽນສະຖານທີ່ປະກອບການຜະລິດ ເປັນຕົ້ນ:

1) ໃບຄໍາຮ້ອງ ຕາມແບບພິມທີ່ກົມປູກຝັງກໍານົດ;
2) ສໍາເນົາ ໃບອະນຸຍາດດໍາເນີນກິດຈະການກະສິກໍາ ແລະ ປ່າໄມ້;
3) ສໍາເນົາ ໃບຢັ້ງຢືນການມອບພັນທະອາກອນປະຈໍາປີສຸດທ້າຍ;
4) ຄູ່ມືດໍາເນີນງານ ກ່ຽວກັບ ການຜະລິດ ແລະ ການປ້ອງກັນກໍາຈັດສັດຕູພືດ;

5) ໃບມອບສິດ ແລະ ສຳເນົາບັດປະຈຳຕົວຂອງຜູ້ຍື່ນເອກະສານ ໃນກໍລະນີ ໃຫ້ຜູ້ອື່ນຍື່ນຄຳຮ້ອງແທນ. ອາຍຸຂອງໃບທະບຽນນຳໃຊ້ໄດ້ ໜຶ່ງ ປີ ແລະ ສາມາດຂໍຕໍ່ໄດ້.

ຜູ້ປະກອບການທີ່ໄດ້ຮັບຂຶ້ນທະບຽນ ແລະ ຮັບຮອງໃຫ້ເປັນຜູ້ສົ່ງອອກ ຈະຖືກເຜີຍແຜ່ ໃນເວັບໄຊ ຂອງ ອົງການບໍລິຫານ ພາສີ ແຫ່ງ ສປ ຈີນ ຊຶ່ງມີຂໍ້ມູນ ຊື່, ທີ່ຢູ່ ແລະ ເລກລະຫັດ.

## 4. ມາດຕະການ ສຸຂານາໄມພືດ ກ່ອນສົ່ງອອກ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດຮັບການຮັບຮອງໃຫ້ເປັນຜູ້ສົ່ງອອກ ຈາກອົງການບໍລິຫານພາສີ ແຫ່ງ ສປ ຈີນ ຕ້ອງປະຕິບັດ ດັ່ງນີ້:

1) ຝັກຫູອກໄໝມ້ອນ ທີ່ຜ່ານຂະບວນການຄວາມຮ້ອນ ສຳລັບສົ່ງໄປ ສປ ຈີນ ຕ້ອງມາຈາກ ໂຕມ້ອນທີ່ມີສຸຂະພາບແຂງແຮງ. ໂຮງເຮືອນລ້ຽງມ້ອນ ຕ້ອງບໍ່ມີພະຍາດ Pebrine disease, Bombyx mori polyhedrosis ແລະ white muscadile ໃນໄລຍະ 6 ເດືອນ ກ່ອນຜະລິດເປັນຝັກຫູອກໄໝມ້ອນ ກ່ອນ;
2) ເຈົ້າໜ້າທີ່ກັກກັນພືດທີ່ຮັບຜິດຊອບ ຕ້ອງກວດກາຄວາມຖືກຕ້ອງຄົບຖ້ວນ ຕາມຫຼັກການນການ ກວດ ແລະ ຕາມຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ຂອງຄຳແນະນຳສະບັບນີ້;
3) ການສົ່ງອອກ ຊຸດສິນຄ້າຝັກຫູອກໄໝມ້ອນ ແຕ່ລະຊຸດ ຕ້ອງມີໃບຢັ້ງຢືນຄວາມສະອາດປອດໄພ (Health Certificate) ເປັນພາສັງອິດ ຄັດຕິດໄປກັບຊຸດສິນຄ້າ. ແບບພິມຂອງໃບຢັ້ງຢືນ ແລະ ກາຈ້ຳ ຕ້ອງນຳສົ່ງໃຫ້ ອົງການພາສີ ແຫ່ງ ສປ ຈີນ ເພື່ອຮັບຮອງ, ພາຍຫຼັງໄດ້ຮັບການຮັບຮອງ ຈາກ ອົງການດັ່ງກ່າວແລ້ວ ຈຶ່ງສາມາດນຳໃຊ້ໄດ້.

## 5. ມາດຕະການກັກກັນພືດ ຢູ່ດ່ານຂາເຂົ້າ

ເມື່ອຊຸດສິນຄ້າຝັກຫູອກໄໝມ້ອນ ຈາກ ສປປ ລາວ ມາເຖິງດ່ານຂາເຂົ້າ ຂອງ ສປ ຈີນ, ເຈົ້າຂອງຊຸດສິນຄ້າ ຕ້ອງແຈ້ງເອກະສານ ຕໍ່ເຈົ້າໜ້າທີ່ກັກກັນພືດ ຂອງ ສປ ຈີນ ເພື່ອດຳເນີນການກວດກາເອກະສານທີ່ກ່ຽວຂ້ອງ.

ການຂົນສົ່ງຊຸດສິນຄ້າທີ່ມາຈາກ ສະຖານທີ່ປະກອບການຜະລິດ ທີ່ບໍ່ໄດ້ຂຶ້ນທະບຽນເປັນຜູ້ນຳເຂົ້າຂອງ ສປ ຈີນແມ່ນຈະຖືກຫ້າມນຳເຂົ້າຢ່າງເດັດຂາດ.

ຖ້າກວດພົບວ່າຝັກຫູອກໄໝມ້ອນ ຂອງ ສປປ ລາວ ສົ່ງໄປ ສປ ຈີນ ນັ້ນ ມີການຝ່າຝືນ ບໍ່ປະຕິບັດຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງຕາມຄຳແນະນຳສະບັບນີ້. ເຈົ້າໜ້າທີ່ພາສີ ຈະອີງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປ ຈີນ ດຳເນີນການມາດຕະການ ອາດໂຈະການນຳເຂົ້າ, ທຳລາຍຖິ້ມ ພ້ອມກັບແຈ້ງເຕືອນ ສະພາບດັ່ງກ່າວ ແລະ ດຳເນີນມາດຕະການ ໃຫ້ຝ່າຍລາວຊາບ. ຜູ້ປະກອບການຕ້ອຊອກຫາສາຍເຫດ ແລະ ນຳໃຊ້ມາດຕະການທີ່ເໝາະສົມເພື່ອປ້ອງກັນບໍ່ໃຫ້ເກີດຂຶ້ນອີກ.

# III. ການຈັດຕັ້ງປະຕິບັດ

1. ໃຫ້ ພະແນກກັກກັນພືດ, ຂະແໜງປູກຝັງ ເປັນເຈົ້າການ ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ໂຄສະນາເຜີຍແຜ່, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ;
2. ໃຫ້ ຂະແໜງປູກຝັງແຂວງ, ນະຄອນຫຼວງ ກວດກາ ແລະ ຢັ້ງຢືນ ສະຖານທີ່ປະກອບການຜະລິດ ທີ່ປະຕິບັດ ຖືກຕ້ອງ ແລະ ສອດຄ່ອງຕາມຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມ ສຳລັບສົ່ງອອກຝັກຫູອກໄໝມ້ອນ ຈາກ ສປປ ລາວ ໄປຍັງ ສປ ຈີນ;
3. ໃຫ້ ພະແນກກັກພືດ ສົ່ງລາຍຊື່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ສະເໜີສົ່ງອອກ ຝັກຫູອກໄໝມ້ອນ ໃຫ້ ສປ ຈີນ ພິຈາລະນາເພື່ອຮັບຮອງ ແຕ່ລະໄລຍະ ໂດຍປະສານສົມທົບກັບຂະແໜງປູກຝັງ ແລະ ສາຍຕັ້ງຂອງຕົນ ເພື່ອກວດກາ ແລະ ປະເມີນຄວາມສ່ຽງສັດຕູພືດ ຂອງສະຖານທີ່ປະກອບການຜະລິດ ໃນແຕ່ລະຊ່ວງລະດູການຜະລິດ;

4. ໃຫ້ ພະແນກກັກກັນພືດ ເປັນໃຈກາງປະສານສົມທົບກັບ ຂະແໜງປູກຝັງ ແລະ ສາຍຕັ້ງຂອງຕົນ ສະຫຼຸບລາຍງານ ກ່ຽວກັບ ການສົ່ງອອກ ຝັກຫູອກໄໝມ້ອນ ຈາກ ສປປ ລາວ ໄປ ສປ ຈີນ ໃຫ້ກົມປູກຝັງຊາບເປັນແຕ່ລະໄລຍະ;
5. ໃຫ້ ເຈົ້າໜ້າທີ່ກັກກັນພືດ ເຂັ້ມງວດໃນການກວດກາ ແລະ ຢັ້ງຢືນ ການສົ່ງອອກ ຝັກຫູອກໄໝມ້ອນ ຕາມຫຼັກວິຊາການ ແລະ ເງື່ອນໄຂ ຂອງ ສປ ຈີນ.
6. ໃນການຈັດຕັ້ງປະຕິບັດຕົວຈິງ ມີຂໍ້ສະດວກ, ຂໍ້ຫຍຸ້ງຍາກແນວໃດ ໃຫ້ຮີບຮ້ອນລາຍງານ ກົມປູກຝັງ ຕາມຂັ້ນຕອນ ເພື່ອພິຈາລະນາ ຫາວິທີແກ້ໄຂຢ່າງທັນການ.

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມ**

ກະຊວງກະສິກຳ ແລະ ປ່າໄມ້ ກົມປູກຝັງ

ວັນທ່ຽງ ພົມມະສຸລິນ